ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ ເລກທີ 5880 /ກງ

ນະຄອນຫລວງວຽງຈັນ, ວັນທີ 22 ພະຈິກ 2021

## ຄຳແນະນຳ

## ວ່າດ້ວຍການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022

- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 30/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 42/ສພຊ, ລົງວັນທີ 17 ພະຈິກ 2021 ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປີ 2021 ແລະ ແຜນການປະຈຳປີ 2022;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021.

**ລັດຖະມົນຕີກະຊວງການເງິນ**
**ອອກຄຳແນະນຳ ດັ່ງນີ້:**

## I. ຈຸດປະສົງ

ເພື່ອຈັດຕັ້ງຜັນຂະຫຍາຍ ມະຕິຂອງສະພາແຫ່ງຊາດ ແລະ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ປະຈຳປີ 2022 ໃຫ້ປະກົດຜົນເປັນຈິງ ແລະ ສາມາດບັນລຸໄດ້ຕາມຄາດໝາຍ, ບົນຈິດໃຈປະຢັດມັດທະຍັດ ແລະ ມີປະສິດທິຜົນສູງສຸດ; ເພີ່ມທະວີການປະຕິບັດວິໄນການເງິນຢ່າງເຂັ້ມງວດ ແນໃສ່ຜ່ອນຄາຍສະພາບຄວາມຫຍຸ້ງຍາກທາງດ້ານການເງິນ-ງົບປະມານ, ສ້າງຄວາມໝັ້ນທ່ຽງໃຫ້ການເງິນແຫ່ງລັດ ແລະ ເສດຖະກິດມະຫາພາກ, ພ້ອມທັງເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

## II. ທິດທາງລວມ ແລະ ຄາດໝາຍສູ້ຊົນ

### 1. ທິດທາງລວມ

- ຊຸກຍູ້ການຟື້ນຕົວຂອງເສດຖະກິດ ໃຫ້ກັບເຂົ້າສູ່ສະພາບປົກກະຕິໂດຍໄວ ໂດຍສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ຄົ້ນຄ້ວານະໂຍບາຍຕໍ່ປະເພດທຸລະກິດຍຸດທະສາດທີ່ ລັດຖະບານສົ່ງເສີມ ເພື່ອສ້າງເປັນພື້ນຖານເສດຖະກິດທີ່ເປັນເສົາຄ້ຳ ແລະ ສາມາດປະກອບສ່ວນພັນທະເຂົ້າງົບປະມານ ແບບໄວ ແລະ ເປັນໄລຍະຍາວ;
- ສູ້ຊົນຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ບົນພື້ນຖານຫຼັກການ ລາຍຮັບພາຍໃນ ໃຫ້ກຸ້ມລາຍຈ່າຍພາຍໃນ ແລະ ໃຫ້ມີສ່ວນເຫຼືອ ເພື່ອຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ ໃຫ້ຫຼຸດລົງເທື່ອລະກ້າວ ຕາມໂຄງສ້າງແຜນງົບປະມານແຫ່ງລັດ ທີ່ສະພາແຫ່ງຊາດ ໄດ້ຮັບຮອງ;
- ຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາທາງດ້ານເສດຖະກິດ-ການເງິນ ໂດຍສະເພາະ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 18/ນຍ, ລົງວັນທີ 16 ກັນຍາ 2021 ວ່າດ້ວຍການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານ ໃຫ້ປະກົດຜົນເປັນຈິງ ເພື່ອສູ້ຊົນຈັດຕັ້ງປະຕິບັດລາຍຮັບງົບປະມານ ໃຫ້ບັນລຸຕາມແຜນການ ຫຼື ເກີນແຜນ;

- ຄົ້ນຄ້ວາກໍານົດການແບ່ງຂັ້ນຄຸ້ມຄອງລາຍຮັບ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃຫ້ສອດຄ່ອງກັບຈຸດພິເສດ ແລະ ທ່າແຮງຂອງແຕ່ລະຂົງເຂດ ຕາມທິດສ້າງຄວາມເຂັ້ມແຂງໃຫ້ທ້ອງຖິ່ນ ເປັນເຈົ້າການໃນການຊຸກຍູ້ເສດຖະກິດຂອງຕົນ;
- ຈັດຕັ້ງປະຕິບັດວຽກງານຈຸດສຸມ ຂອງແຜນພັດທະນາຂະແໜງການເງິນ ປີ 2021-2025 ເພື່ອປັບປຸງວຽກງານການເງິນ-ງົບປະມານ ໃຫ້ກາຍເປັນເຄື່ອງມືທີ່ມີປະສິດທິຜົນຂຶ້ນຕື່ມ, ພ້ອມທັງ ເອົາໃຈໃສ່ປະຕິບັດນະໂຍບາຍວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍ ແລະ ດໍາລັດວ່າດ້ວຍລົດຂອງລັດ ດ້ວຍຄວາມເປັນເຈົ້າການ ບົນພື້ນຖານຮັບປະກັນໃຫ້ສາມາດບັນລຸບັນດາແຜນງານ ທີ່ລັດຖະບານ ໄດ້ກໍານົດ ໂດຍສະເພາະວຽກຮັບມືກັບການແຜ່ລະບາດຂອງພະຍາດ Covid-19;
- ສືບຕໍ່ແກ້ໄຂຂໍ້ຄົງຄ້າງ ຕາມຄໍາແນະນໍາຂອງອົງການກວດສອບແຫ່ງລັດ ຕາມມະຕິຂອງສະພາແຫ່ງຊາດ ຢ່າງຕັ້ງໜ້າ ແລະ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອກໍານົດມາດຕະການ, ວິທີການແກ້ໄຂຂໍ້ຄົງຄ້າງໃຫ້ເປັນຮູບປະທໍາໃນແຕ່ລະໄລຍະ ແລະ ກ້າວໄປສູ່ການແກ້ໄຂຢ່າງຂາດຕົວ.

**2. ຄາດໝາຍແຜນງົບປະມານແຫ່ງລັດ ປີ 2022**

- ແຜນລາຍຮັບທັງໝົດ 31.593 ຕື້ກີບ ເທົ່າກັບ 16,44% ຂອງ GDP;
- ແຜນລາຍຈ່າຍທັງໝົດ 34.691 ຕື້ກີບ ເທົ່າກັບ 18,05% ຂອງ GDP;
- ຂາດດູນງົບປະມານ 3.098 ຕື້ກີບ ເທົ່າກັບ 1,61% ຂອງ GDP;

(ມູນຄ່າ GDP ເທົ່າກັບ 192.145 ຕື້ກີບ)

## III. ມາດຕະການຈັດຕັ້ງປະຕິບັດ

**1. ດ້ານການຄຸ້ມຄອງເກັບລາຍຮັບ**

**1.1 ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ**

- ຍົກສູງຄວາມຮັບຜິດຊອບໃນການຊຸກຍູ້, ຕິດຕາມ, ກວດກາ ບັນດາຖານລາຍຮັບທີ່ນອນໃນຄວາມຮັບຜິດຊອບຂອງຕົນ ໃຫ້ຄົບຖ້ວນ ແລະ ຖືກຕ້ອງ ຕາມຕົວຈິງ, ພ້ອມທັງ ສົມທົບກັບຂະແໜງການເງິນ ອອກມາດຕະການໃນການຂະຫຍາຍ ແລະ ສ້າງຖານລາຍຮັບໃໝ່ ໃຫ້ເປັນແຫຼ່ງທີ່ໝັ້ນຄົງໃນຕໍ່ໜ້າ;
- ເລັ່ງທວງ ເກັບຄືນພັນທະຕ່າງໆ ທີ່ຄ້າງມອບ ແລະ ເກັບກູ້ຄືນ ຈາກການກວດເຫັນເພີ່ມຕາມຜົນກວດສອບ-ກວດກາ ທີ່ຍັງຄ້າງນໍາຫົວໜ່ວຍງົບປະມານໃຫ້ຄົບຖ້ວນ ຕາມກົດໝາຍ ແລະ ລະບຽບການ;
- ໃຫ້ບັນດາຂະແໜງການທີ່ມີລາຍຮັບຄ່າບໍລິການທາງດ້ານວິຊາການ ແລະ ກອງທຶນຂອງລັດ ເອົາໃຈໃສ່ຈັດຕັ້ງປະຕິບັດຕາມຄໍາແນະນໍາ ສະບັບເລກທີ 0016/ກງ ລົງວັນທີ 03 ມັງກອນ 2019. ສໍາລັບ ຂະແໜງສາຍຕັ້ງ ໃຫ້ມອບລາຍຮັບຂອງຕົນ ເຂົ້າບັນຊີສູນກາງ ທີ່ເປີດໄວ້ຢູ່ຄັງເງິນແຫ່ງຊາດ ປະຈໍາທ້ອງຖິ່ນ ໂດຍບໍ່ອະນຸຍາດໃຫ້ມອບເຂົ້າເປັນລາຍຮັບຂອງທ້ອງຖິ່ນ.

**1.2 ຂະແໜງການເງິນ**

1.2.1 ສ່ວຍສາອາກອນ

- ສຸມໃສ່ການເກັບກໍາຂໍ້ມູນ ແລະ ຂຸດຄົ້ນແຫຼ່ງລາຍຮັບທີ່ຍັງບົ່ມຊ້ອນ ເພື່ອທົດແທນແຫຼ່ງລາຍຮັບທີ່ສູນເສຍໄປຍ້ອນການແຜ່ລະບາດຂອງພະຍາດໂຄວິດ-19, ເປັນຕົ້ນ: ການລົງສໍາຫຼວດຂະໜາດລາຍຮັບຂອງຫົວໜ່ວຍທຸລະກິດຄືນໃໝ່ ໃຫ້ມີຄວາມຊັດເຈນເຊັ່ນ: ຫົວໜ່ວຍທີ່ມີລາຍຮັບປະຈໍາປີ 50 ລ້ານກີບລົງມາ, ລາຍຮັບ 50 ລ້ານ ຫາ 400 ລ້ານກີບ ແລະ ລາຍຮັບເກີນ 400 ລ້ານກີບຕໍ່ປີ ເພື່ອຈັດແບ່ງຂະໜາດຂອງຫົວໜ່ວຍທຸລະກິດຄືນໃໝ່ໃຫ້ມີຄວາມຖືກຕ້ອງ ແລະ ຮັບປະກັນໃຫ້ຫົວໜ່ວຍທຸລະກິດເສຍພັນທະຖືກຕ້ອງຕາມຂະໜາດລາຍຮັບຕົວຈິງຂອງຕົນ;
- ປະເມີນຄືນວຽກງານການກໍານົດເງື່ອນໄຂຫົວໜ່ວຍທຸລະກິດ, ການຫັນຫົວໜ່ວຍທຸລະກິດເຂົ້າສູ່ລະບົບອາກອນມູນຄ່າເພີ່ມ ລວມທັງອາກອນມອບເໝົາ ແລະ ອາກອນຄ່າເຊົ່າ ໃຫ້ການແຈ້ງມອບຜ່ານທະນາຄານ ແລະ ຜ່ານລະບົບ (TaxRIS) ຢູ່ສ່ວຍສາອາກອນນະຄອນຫຼວງ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ ໃຫ້ຫຼາຍຂຶ້ນ ໂດຍໂຄສະນາຜ່ານສື່ຕ່າງໆ ເພື່ອສ້າງຄວາມສະດວກ, ຫຼຸດຜ່ອນສິ່ງກີດຂວາງ ແລະ ຄ່າສິ້ນເປືອງຕ່າງໆ ໃນການດໍາເນີນທຸລະກິດ ຮັບປະກັນຄວາມໂປ່ງໃສ ແລະ ສາມາດກວດສອບໄດ້;

- ປັບປຸງກົນໄກຄຸ້ມຄອງເກັບລາຍຮັບ ຈາກຂະແໜງຄຸ້ມຄອງຊັບສິນຂອງລັດ ແລະ ຄຸ້ມຄອງການເງິນວິສາຫະກິດຂອງລັດ ມາລວມສູນເຂົ້າໃນລະບົບຄຸ້ມຄອງລາຍຮັບອາກອນ (TaxRIS) ລວມທັງການຫັນເອົາບາງໜ້າວຽກຂອງກົງຈັກ ແລະ ບຸກຄະລາກອນ ມາຂຶ້ນກັບການຄຸ້ມຄອງຂອງຂະແໜງສ່ວຍສາອາກອນ;
- ຄົ້ນຄວ້າຄັດເລືອກ ແລະ ໂອນຫົວໜ່ວຍທຸລະກິດທີ່ຂຶ້ນກັບການຄຸ້ມຄອງຂອງສູນກາງ ແຕ່ມີທີ່ຕັ້ງ ແລະ ເຄື່ອນໄຫວທຸລະກິດຢູ່ທ້ອງຖິ່ນ ໃຫ້ບັນດາແຂວງຄຸ້ມຄອງຈັດເກັບລາຍຮັບ ເພື່ອສ້າງຄວາມເຂັ້ມແຂງທາງດ້ານການເງິນ ໂດຍໃຫ້ສອດຄ່ອງກັບຄຳແນະນຳ ສະບັບເລກທີ 4488/ກງ, ລົງວັນທີ 07 ພະຈິກ 2019;
- ສຸມໃສ່ການປັບປຸງແກ້ໄຂລະບົບການແຈ້ງ, ການມອບ ແລະ ການກວດກາພັນທະ ຈາກການນຳເຂົ້າ-ຈຳໜ່າຍ, ການເຄື່ອນຍ້າຍນ້ຳມັນເຊື້ອໄຟ-ນ້ຳມັນຫຼໍ່ລື່ນ, ວັດສະດຸກໍ່ສ້າງ, ເຄື່ອງໃຊ້ໄຟຟ້າ, ສິນຄ້າອຸປະໂພກ-ບໍລິໂພກ ແລະ ຈາກທຸລະກິດຂະແໜງບໍ່ແຮ່ ແລະ ພະລັງງານໄຟຟ້າ;
- ສືບຕໍ່ວຽກງານຄຸ້ມຄອງເກັບອາກອນມູນຄ່າເພີ່ມ, ອາກອນຊົມໃຊ້ຈາກການສະໜອງບໍລິການຊົມໃຊ້ໄຟຟ້າ, ໂທລະສັບ ແລະ ອິນເຕີເນັດທີ່ມີການຊົມໃຊ້ເພີ່ມຂຶ້ນ, ຄຸ້ມຄອງຈັດເກັບລາຍຮັບອາກອນຈາກຖານໃໝ່ ແລະ ອາກອນຊົມໃຊ້ເພີ່ມຈາກຢາສູບ;
- ຄົ້ນຄວ້າກົນໄກ ຄຸ້ມຄອງ ແລະ ຈັດເກັບລາຍຮັບຕ່າງໆ ຈາກທຸລະກິດດີຈີຕ້ອນ (**Digital**) ໃຫ້ຖືກຕ້ອງ ແລະ ຄົບຖ້ວນ; ປັບປຸງກົນໄກການເກັບລາຍຮັບຄ່າທຳນຽມນຳໃຊ້ທີ່ດິນ ແລະ ອາກອນລາຍໄດ້ຈາກການໂອນກຳມະສິດທີ່ດິນຜ່ານລະບົບທະນາຄານ ໂດຍນຳໃຊ້ລາຄາປະເມີນທີ່ດິນໃນແຕ່ລະເຂດ ເປັນພື້ນຖານຄິດໄລ່ ໃນຂອບເຂດທົ່ວປະເທດ;
- ເກັບກຳ ແລະ ກວດກາ ຂໍ້ມູນ, ສະຖິຕິ ປະຫວັດການເຄື່ອນໄຫວທຸລະກິດ, ການປະຕິບັດການແຈ້ງມອບລາຍຮັບອາກອນປະເພດຕ່າງໆ ຢ່າງເປັນລະບົບ ແລະ ຕໍ່ເນື່ອງ, ພ້ອມທັງ ສືບຕໍ່ການກວດກາບັນຊີວິສາຫະກິດຕາມການວິໄຈຄວາມສ່ຽງ (16 ຕົວຊີ້ວັດ) ເພື່ອໃຫ້ການກວດກາ ແລະ ຈັດເກັບລາຍຮັບຢ່າງມີປະສິດທິຜົນ;

1.2.2 ພາສີ

- ລົງເລິກຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ບັນດາຄຳແນະນຳຂອງກະຊວງການເງິນ ໃຫ້ເປັນຮູບປະທຳ, ເປັນຕົ້ນ:
  + ຄຳແນະນຳ ສະບັບເລກທີ 4491/ກງ, ລົງວັນທີ 14 ກັນຍາ 2021 ໃນການເພີ່ມທະວີຕ້ານການຮົ່ວໄຫຼ ແລະ ຄຸ້ມຄອງເກັບລາຍຮັບຈາກການນຳເຂົ້ານ້ຳມັນເຊື້ອໄຟໃຫ້ຄົບຖ້ວນ ແລະ ຖືກຕ້ອງ;
  + ຄຳແນະນຳ ສະບັບເລກທີ 4490/ກງ, ລົງວັນທີ 14 ກັນຍາ 2021 ໃນການເພີ່ມທະວີຕ້ານການຮົ່ວໄຫຼ ແລະ ຄຸ້ມຄອງເກັບລາຍຮັບຈາກການນຳເຂົ້າ ສິນຄ້າວັດສະດຸກໍ່ສ້າງ, ເຄື່ອງໄຟຟ້າ, ເຄື່ອງອຸປະໂພກບໍລິໂພກ ແລະ ອື່ນໆ ໃຫ້ຄົບຖ້ວນ ແລະ ຖືກຕ້ອງ;
  + ຄຳແນະນຳ ສະບັບເລກທີ 4572/ກງ, ລົງວັນທີ 17 ກັນຍາ 2021 ໃນການຢຸດຕິການເສຍພາສີຍ່ອຍ ຢູ່ດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ ຫັນມາແຈ້ງເສຍພາສີເປັນອັນລະອຽດ ເພື່ອອັດຊ່ອງຫວ່າງການຮົ່ວໄຫຼຂອງລາຍຮັບ.
- ປັບປຸງ ແລະ ເຊື່ອມລະບົບການແຈ້ງນຳເຂົ້າສິນຄ້າ ຂອງຂະແໜງພາສີ ກັບ ຂອດພາຍໃນຂະແໜງສ່ວຍສາອາກອນຮັບຜິດຊອບ ຕາມເງື່ອນໄຂ AEO;
- ສ້າງຄູ່ມືຖານລາຄາແຈ້ງສິນຄ້າ ໃຫ້ບັນດາດ່ານຊາຍແດນ ເພື່ອເປັນຂໍ້ມູນໃນການຈັດຕັ້ງປະຕິບັດ, ພ້ອມທັງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ປັບປຸງຂັ້ນຕອນການແຈ້ງພາສີ ໃຫ້ກະທັດຮັດງ່າຍດາຍ ແລະ ປັບປຸງວຽກງານກວດກາຄືນການແຈ້ງມູນຄ່າສິນຄ້າ ໃຫ້ມີຄວາມຊັດເຈນ ໂດຍການພັດທະນາຖານຂໍ້ມູນໃນລະບົບອາຊີກຸດາ (ASYCUDA);
- ດັດສົມ ຜູ້ບໍລິການແຈ້ງພາສີທີ່ມີການເຄື່ອນໄຫວບໍ່ຖືກຕ້ອງ ໂດຍສ້າງຕັ້ງນິຕິບຸກຄົນ ມີສັນຍາຄ້ຳປະກັນກັບລັດຖະການພາສີ ເພື່ອແກ້ໄຂການສົມຮູ້ຮ່ວມຄິດການຄ້າຂາຍເຖື່ອນ ແລະ ການຫຼົບຫຼີກການເສຍພາສີ-ອາກອນ ໃນບັນດາດ່ານພາສີຊາຍແດນທົ່ວປະເທດ, ພ້ອມທັງ ສືບຕໍ່ຜັນຂະຫຍາຍວຽກງານສືບສວນ-ສອບສວນ ແລະ ປາບ

ປາມການລັກລອບໜີພາສີ ໂດຍການປັບປຸງຕາໜ່າງການເຄື່ອນໄຫວ ໄປສູ່ບັນດາແຂວງ ແລະ ບ່ອນທີ່ມີຄວາມສ່ຽງໃນການລັກລອບ ໃນທົ່ວປະເທດ;

- ສືບຕໍ່ຜັນຂະຫຍາຍການນຳໃຊ້ເຄື່ອງມືທັນສະໄໝເຂົ້າໃນວຽກງານພາສີ ເປັນຕົ້ນ: ລະບົບການແຈ້ງພາສີປະຕູດຽວ, ລະບົບຄຸ້ມຄອງ ບ 53, ລະບົບສະແກນເນີ, ລະບົບກ້ອງວົງຈອນປິດ, ຕິດຕັ້ງຊິງສັ່ງນ້ຳໜັກ ຢູ່ບັນດາດ່ານ, ພ້ອມທັງດຳເນີນໂຄງການຊຳລະພາສີ-ອາກອນ ຜ່ານລະບົບໂທລະສັບມືຖື, ເຄື່ອງເອເລັກໂຕຼນິກ, ການຊື້-ຂາຍສິນຄ້ານຳເຂົ້າຜ່ານລະບົບ Online (e-commerce) ແລະ ອື່ນໆ;
- ແກ້ໄຂລັດລັກລອບໜີພາສີ ໂດຍແຕ່ງຕັ້ງຄະນະສະເພາະກິດແກ້ໄຂລົດນຳເຂົ້າບໍ່ຖືກຕ້ອງຂັ້ນສູນກາງ ເພື່ອດຳເນີນແກ້ໄຂໃຫ້ລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
- ຮີບຮ້ອນດຳເນີນການສົ່ງອອກໄມ້ ຕາມແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 885/ຫສນຍ ບ້ວງ 257.117 ແມັດກ້ອນ ແລະ ສະບັບເລກທີ 1156/ຫສນຍ ບ້ວງ 188.000 ແມັດກ້ອນ.

1.2.3 ຄຸ້ມຄອງຊັບສິນຂອງລັດ

- ເກັບກຳຂໍ້ມູນຂຶ້ນບັນຊີ ຊັບສິນຂອງລັດ, ຊັບສິນທີ່ ບຸກຄົນ ແລະ ນິຕິບຸກຄົນນຳໃຊ້ ເຂົ້າໃນການດຳເນີນທຸລະກິດແຕ່ຍັງບໍ່ທັນປະຕິບັດພັນທະໃຫ້ລັດ ເພື່ອສ້າງ ແລະ ພັດທະນາລະບົບຂໍ້ມູນຂ່າວສານຄຸ້ມຄອງຊັບສິນຂອງລັດ ແບບອີເລັກໂຕຼນິກ (AMIS) ໃຫ້ທັນສະໄໝ, ຂຶ້ນແຜນນຳໃຊ້ໃຫ້ເກີດປະໂຫຍດສູງສຸດຕໍ່ງົບປະມານແຫ່ງລັດ, ກວດກາຄືນຄ່າເຊົ່າສຳປະທານທີ່ດິນລັດ ທີ່ຄ້າງມອບ ແລະ ເຫັນວ່າຍັງບໍ່ທັນສອດຄ່ອງກັບອັດຕາທີ່ນິຕິກຳໄດ້ກຳນົດ ແລະ ກວດຄືນສັນຍາເຊົ່າ, ສຳປະທານທີ່ໝົດກຳນົດ;
- ເພີ່ມທະວີວຽກງານຕິດຕາມກວດກາ, ຄຸ້ມຄອງ, ນຳໃຊ້ຊັບສິນຂອງລັດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ເປັນຕົ້ນການລັກລອບຂຸດຄົ້ນ ແລະ ເຄື່ອນຍ້າຍຊັບພະຍາກອນທຳມະຊາດ ທີ່ບໍ່ຖືກຕ້ອງເພື່ອດຳເນີນມາດຕະການຮິບ ແລະ ປັບໃໝ ເພື່ອມອບເຂົ້າງົບປະມານ;
- ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງເກັບລາຍຮັບບົນຜ່ານ, ຄ່າພາກຫຼວງ, ຄ່າເຊົ່າ, ຄ່າສຳປະທານ, ຄ່າທຳນຽມ, ຄ່າເຊົ່າຄື້ນຄວາມຖີ່, ຄ່າເຊົ່າເລກໝາຍໂທລະສັບ, ຄ່າລິຂະສິດ ແລະ ອື່ນໆ ໃຫ້ຮັດກຸມ ແລະ ຄົບຖ້ວນ, ພ້ອມທັງ ໄລ່ລຽງຄືນການນຳໃຊ້ຊັບພະຍາກອນແຮ່ທາດປ້ອນເຂົ້າໂຮງງານສີມັງ, ຄາສິໂນ ແລະ ອື່ນໆ;
- ສົມທົບກັບຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອຕິດຕາມເອົາບັນດາຊັບສິນບັດທີ່ສານໄດ້ຕັດສິນເປັນຂອງລັດ ເຊັ່ນ: ເງິນ, ວັດຖຸມີຄ່າ, ທີ່ດິນ, ສິ່ງກໍ່ສ້າງ, ພາຫະນະ, ວັດຖຸອຸປະກອນ ແລະ ອື່ນໆ ເພື່ອຂຶ້ນບັນຊີລວມສູນ ຢູ່ຂະແໜງການຄຸ້ມຄອງຊັບສິນຂອງລັດ ແລະ ມອບເຂົ້າງົບປະມານຂອງລັດ ຕາມກົດໝາຍ ແລະ ຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 07/ນຍ, ລົງວັນທີ 05/04/2017 ວ່າດ້ວຍການເຕົ້າໂຮມຊັບສິນທີ່ໄດ້ຈາກການຮິບ ຕາມສານຕັດສິນ;
- ເອົາໃຈໃສ່ຕິດຕາມ, ກວດກາການປະມູນຈັດຊື້ດ້ວຍທຶນຂອງລັດໃຫ້ມີຄວາມໂປ່ງໃສ ຕາມກົດໝາຍ ແລະ ລະບຽບຫຼັກການ, ພ້ອມທັງ ເອົາໃຈໃສ່ຕິດຕາມກວດກາຊັບສິນຂອງບັນດາໂຄງການທີ່ນຳໃຊ້ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າໃຫ້ນຳໃຊ້ຖືກຕ້ອງຕາມເປົ້າໝາຍ ແລະ ລະບຽບການ;

1.2.4 ປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ

- ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າມາດຕະການປະຕິຮູບວິສາຫະກິດລັດລົງທຶນ ທີ່ດຳເນີນທຸລະກິດຂາດທຶນ, ຂາດສະພາບຄ່ອງດ້ວຍຫຼາຍຮູບແບບເຊັ່ນ: ຊອກຄູ່ຮ່ວມທຸລະກິດຍຸດທະສາດ, ປັບປຸງກົນໄກການບໍລິຫານ, ແບ່ງຄວາມຮັບຜິດຊອບລະຫວ່າງຂະແໜງການເງິນ ແລະ ຂະແໜງການກ່ຽວຂ້ອງໃຫ້ຈະແຈ້ງ ແລະ ມີການກວດກາປະເມີນຜົນຢ່າງເປັນລະບົບ;
- ຄົ້ນຄວ້າ ຜັນຂະຫຍາຍ ຂໍ້ຕົກລົງວ່າດ້ວຍ ການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳຄົ້ນຄວ້າການຫັນຊັບສິນຂອງລັດເປັນທຶນ ສະບັບເລກທີ 98/ນຍ, ລົງວັນທີ 20 ຕຸລາ 2020;

- ປັບປຸງ ແລະ ສ້າງຂີດຄວາມສາມາດໃນການຄຸ້ມຄອງບໍລິຫານ, ມີບົດວິພາກເສດຖະກິດ-ເຕັກນິກ ແລະ ການຄິດໄລ່ຜົນຕອບແທນທີ່ຮັດກຸມ ເພື່ອຮັບປະກັນ ໃຫ້ບັນດາວິສາຫະກິດລັດລົງທຶນ ແລະ ວິສາຫະກິດປະສົມສາມາດເຂົ້າເຖິງແຫຼ່ງທຶນ ແນໃສ່ເຮັດໃຫ້ ການບໍລິຫານທຸລະກິດມີຄວາມຄ່ອງຕົວ ແລະ ມີປະສິດທິຜົນ;
- ປັບປຸງກົນໄກການຄຸ້ມຄອງການເກັບໜີ້ສິນທວງຍາກ ທີ່ບັນດາແຂວງເກັບຊ່ວຍສູນກາງ ໂດຍມອບໃຫ້ເປັນລາຍຮັບຂອງແຂວງ ເພື່ອເປັນການພັດທະນາທ້ອງຖິ່ນ ແລະ ເປັນການກະຕຸກຊຸກຍູ້ວຽກງານເກັບລາຍຮັບໃຫ້ມີປະສິດທິຜົນຂຶ້ນຕື່ມ.

2. ດ້ານການຄຸ້ມຄອງ ແລະ ປະຕິບັດລາຍຈ່າຍ

2.1 ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ

- ໃຫ້ຄິດໄລ່ດັດສະນີເງິນເດືອນພື້ນຖານ ຂອງພະນັກງານລັດຖະກອນ, ທະຫານ, ຕໍາຫຼວດ ແລະ ພະນັກງານບໍານານ ມູນຄ່າ 7.350 ກີບ/ດັດສະນີ ເປັນພື້ນຖານໃນການຄິດໄລ່ ແລະ ເບີກຈ່າຍ ເງິນເດືອນ ແລະ ເງິນນະໂຍບາຍຕ່າງໆ;
- ເອົາໃຈໃສ່ຈັດສັນແຜນລາຍຈ່າຍເງິນເດືອນ ແລະ ເງິນນະໂຍບາຍ ໃຫ້ເປັນບູລິມະສິດ ແລະ ພຽງພໍ (ບໍ່ໃຫ້ຂຶ້ນແຜນສູງເກີນຄວາມຕ້ອງການຈ່າຍຕົວຈິງ) ຍົກສູງຄວາມຮັບຜິດຊອບໃນການປະກອບເອກະສານຂໍເບີກຈ່າຍໃຫ້ທັນເວລາ. ສໍາລັບທ້ອງຖິ່ນ ພາຍຫຼັງຈັດຕັ້ງປະຕິບັດ 09 ເດືອນ ຫາກເຫັນວ່າແຜນລາຍຈ່າຍເງິນເດືອນ ບໍ່ພຽງພໍ ໃຫ້ພະແນກການເງິນເປັນເຈົ້າການ ກວດກາ ໄລ່ລຽງ ຢ່າງລະອຽດ ແລ້ວນໍາສະເໜີຕໍ່ກະຊວງການເງິນ (ກົມງົບປະມານແຫ່ງລັດ) ເພື່ອຄົ້ນຄ້ວາ ຈັດສັນ ແລະ/ຫຼື ເບີກຈ່າຍ;
- ການປະຕິບັດລາຍຈ່າຍເງິນສົມທົບກອງທຶນປະກັນສັງຄົມ 8,5% ໃຫ້ຄິດໄລ່ຢ່າງລະອຽດ ແລະ ເບີກຈ່າຍ ບົນພື້ນຖານສະຖິຕິ ການສົມທົບທຶນ 8% ຂອງພະນັກງານ-ລັດຖະກອນ, ທະຫານ ແລະ ຕໍາຫຼວດ; ພ້ອມນັ້ນ, ໃຫ້ທ້ອງຖິ່ນ ເອົາໃຈໃສ່ໃນການໂອນເງິນສົມທົບທຶນ 8% ເຂົ້າບັນຊີກອງທຶນປະກັນສັງຄົມຂອງ ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ໄປພ້ອມກັບການເບີກຈ່າຍເງິນເດືອນປົກກະຕິ;
- ເປັນເຈົ້າການສົມທົບກັບຄັງເງິນແຫ່ງຊາດ ກວດກາ ແລະ ແກ້ໄຂ ລາຍຈ່າຍລ່ວງໜ້າຂອງຕົນໃນລະບົບຄັງເງິນທີ່ມີຕົວເລກສະສົມຜ່ານມາ ໂດຍຄົ້ນຄວ້າຈັດສັນເຂົ້າໃນແຜນງົບປະມານຂອງຕົນທີ່ໄດ້ຮັບ ຕາມຄວາມອາດສາມາດໃນແຕ່ລະປີ;
- ການປະຕິບັດແຜນງົບປະມານຕ້ອງໃຫ້ສອດຄ່ອງຕາມສາລະບານງົບປະມານ-ບັນຊີດຽວ ບົນພື້ນຖານຕົວເລກແຜນງົບປະມານປະຈໍາປີ, ປະຈໍາງວດ ທີ່ກະຊວງການເງິນແຈ້ງໃຫ້ ເຂົ້າໃນລະບົບຂໍ້ມູນຂ່າວສານການເງິນ.
- ບັນດາເມືອງທີ່ບໍ່ມີລະບົບຂໍ້ມູນຂ່າວສານການເງິນ ພາຍຫຼັງການຈັດຕັ້ງປະຕິບັດລາຍຈ່າຍ (ໃບອະນຸມັດ ແລະ ໃບຖອນເງິນ) ໃຫ້ສັງລວມຂໍ້ມູນລະອຽດ ສົ່ງຂະແໜງງົບປະມານ ແລະ ຄັງເງິນແຫ່ງຊາດ ເພື່ອບັນທຶກເຂົ້າໃນລະບົບຂໍ້ມູນຂ່າວສານການເງິນ ເປັນແຕ່ລະເດືອນ;
- ໃຫ້ເອົາໃຈໃສ່ສະເໜີອະນຸມັດລາຍຈ່າຍເງິນລົງທຶນປົກກະຕິປະຈໍາປີ ດ້ວຍການຈັດລຽງບູລິມະສິດລາຍຈ່າຍ, ຈັດສັນເປັນແຜນງວດຕາມເພດານແຜນລາຍຈ່າຍ ແຕ່ລະງວດທີ່ກະຊວງການເງິນ ແຈ້ງໃຫ້, ບໍ່ອະນຸຍາດໃຫ້ສະເໜີອະນຸມັດເກີນແຜນງວດເດັດຂາດ;
- ຈັດຕັ້ງປະຕິບັດ ແລະ ປະເມີນ ການເຮັດທົດລອງການຫັນກຸ້ມຕົນເອງທາງດ້ານງົບປະມານ ຂອງຫົວໜ່ວຍທີ່ຖືກແຕ່ງຕັ້ງແລ້ວ ຕາມຄໍາແນະນໍາ ຂອງກະຊວງການເງິນ ສະບັບເລກທີ 2258/ກງ, ລົງວັນທີ 21/05/2021, ພ້ອມທັງສືບຕໍ່ຜັນຂະຫຍາຍ ເພີ່ມເຕີມໃນຫົວໜ່ວຍ ຫຼື ພາກສ່ວນທີ່ມີເງື່ອນໄຂ;
- ລາຍຈ່າຍວິຊາການ ແລະ ກອງທຶນ ໃຫ້ເປັນເຈົ້າການຈັດປະຕິບັດຕາມ ຄໍາແນະນໍາ ກ່ຽວກັບການຄຸ້ມຄອງລາຍຮັບ-ລາຍຈ່າຍຄ່າບໍລິການທາງດ້ານວິຊາການ ແລະ ກອງທຶນຂອງລັດ ສະບັບເລກທີ 0016/ກງ, ລົງວັນທີ 03 ມັງກອນ 2019;
- ເປັນເຈົ້າການຈັດຕັ້ງປະຕິບັດນະໂຍບາຍປະຢັດ ແລະ ຕ້ານການຟູມເຟືອຍ ໃຫ້ເອົາໃຈໃສ່ບາງມາດຕະການສໍາຄັນດັ່ງນີ້:
  + ໃຫ້ເລືອກເຟັ້ນ ແລະ ປະຕິບັດສະເພາະບາງຮ່ວງລາຍຈ່າຍທີ່ຈໍາເປັນຂອງຂະແໜງການຕົນເທົ່ານັ້ນ, ພ້ອມທັງ ຫຼຸດຜ່ອນ ຫຼື ຢຸດຕິບາງລາຍຈ່າຍ ທີ່ເຫັນວ່າມີລັກສະນະຊໍ້າຊ້ອນ ແລະ ບໍ່ມີປະສິດທິຜົນເທົ່າທີ່ຄວນ ເຊັ່ນ: ການເດີນທາງໄປເຮັດວຽກທາງການຢູ່ ພາຍໃນ ແລະ ຕ່າງປະເທດ, ປະຊຸມ-ສໍາມະນາ, ຫຼຸດຜ່ອນການຈັດກິດຈະກໍາ, ການຈັດງານ

ລ້ຽງທີ່ມີລັກສະນະຟຸ່ມເຟືອຍ. ສໍາລັບບັນດາກິດຈະກໍາ ຫຼື ແຜນງານ ທີ່ຂຶ້ນແຜນໄວ້ ແຕ່ບໍ່ໄດ້ເຄື່ອນໄຫວ ແມ່ນບໍ່ອະນຸຍາດໃຫ້ປະກອບເອກະສານ ເພື່ອຂໍເບີກຖອນຜ່ານ ຄັງເງິນແຫ່ງຊາດ. ກໍລະນີໄດ້ເບີກຖອນຕາມແຜນການ ແຕ່ບໍ່ໄດ້ນໍາໃຊ້ ຫຼື ນໍາໃຊ້ບໍ່ໝົດ ຕ້ອງໄດ້ມອບເຂົ້າງົບປະມານຄືນ ຕາມແຈ້ງການຂອງກະຊວງການເງິນ ສະບັບເລກທີ 0846/ກງ, ລົງວັນທີ 23 ມີນາ 2020 ຢ່າງເຂັ້ມງວດ;

+ ສໍາລັບຄ່າໄຟຟ້າ, ນໍ້າປະປາ, ໂທລະສັບ ແລະ ອິນເຕີເນັດ ໃຫ້ເອົາໃຈໃສ່ເບີກຈ່າຍຕາມແຜນຊົມໃຊ້ຕົວຈິງທີ່ຂຶ້ນໄວ້ ແລະ ມີສ່ວນຊໍາລະໜີ້ສິນທີ່ມີຕົວຈິງ ໂດຍບໍ່ອະນຸຍາດໃຫ້ຕັດສະເລ່ຍແຜນດັ່ງກ່າວໄປໃສ່ຮ່ວງອື່ນ ຫຼື ພາກອື່ນ, ພ້ອມທັງ ເປັນເຈົ້າການໃນການຄຸ້ມຄອງ ແລະ ຕິດຕາມກວດກາການຊົມໃຊ້ ເປັນແຕ່ລະເດືອນໃຫ້ປະຢັດຫຼາຍຂຶ້ນ, ຖ້າເຫັນວ່າມີລາຄາເພີ່ມຂຶ້ນຜິດປົກກະຕິ ຕ້ອງມີການກວດກາການຊົມໃຊ້ຕົວຈິງ ຢ່າງລະອຽດທັນການ.

2.2 ຂະແໜງການເງິນ

- ກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ ຮີບຮ້ອນປັບປຸງ ລະບົບຄຸ້ມຄອງຂໍ້ມູນຂ່າວສານ ການເງິນຂອງລັດຖະບານ (GFIS PLUS) ໃຫ້ສໍາເລັດ ເພື່ອຮັບປະກັນການສ້າງແຜນງົບປະມານ, ການອະນຸມັດ ແລະ ການສ້າງໃບຂໍຖອນຜ່ານລະບົບດັ່ງກ່າວໃຫ້ມີຄວາມສະດວກ ເພື່ອສ້າງພື້ນຖານໃຫ້ການນໍາໃຊ້ລະບົບ (FMIS) ຕາມມາດຕະຖານສາກົນໃນຕໍ່ໜ້າ.
- ກົມງົບປະມານແຫ່ງລັດ ເປັນເຈົ້າການ:

+ ໃຫ້ຖືເອົາການປະຕິບັດລາຍຈ່າຍເງິນເດືອນ, ເງິນນະໂຍບາຍ, ການຊໍາລະຕົ້ນທຶນເງິນກູ້ຢືມ ແລະ ດອກເບ້ຍ ໃຫ້ເປັນບູລິມະສິດ. ກໍລະນີທີ່ຮອດກໍານົດເວລາທີ່ຕ້ອງອະນຸມັດລາຍຈ່າຍບ້ວງດັ່ງກ່າວ ແຕ່ບັນດາຫົວໜ່ວຍງົບປະມານ ບໍ່ສາມາດປະກອບເອກະສານ ສະເໜີຂໍອະນຸມັດຕາມກໍານົດ ໃຫ້ຂະແໜງງົບປະມານ ສາມາດດໍາເນີນການອະນຸມັດແຜນລາຍຈ່າຍບົນພື້ນຖານຕາມເພດານແຜນປະຈໍາປີ ຂອງບັນດາຫົວໜ່ວຍງົບປະມານ;

+ ຕິດຕາມ ແລະ ປະເມີນ ສະພາບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ເປັນແຕ່ລະໄລຍະຢ່າງໃກ້ຊິດ, ຖ້າຫາກເຫັນວ່າ ການຈັດເກັບລາຍຮັບຈະບໍ່ສາມາດບັນລຸໄດ້ຕາມແຜນການ ອະນຸຍາດໃຫ້ລົງເລິກກວດກາ ແລະ ເລືອກເຟັ້ນ ການອະນຸມັດສະເພາະລາຍຈ່າຍທີ່ຈໍາເປັນ ຫຼື ຄົ້ນຄ້ວາຫຼຸດແຜນລາຍຈ່າຍ ເພື່ອນໍາສະເໜີ ຂັ້ນເທິງ ພິຈາລະນາ;

+ ລົງກວດກາຫຼັງຈ່າຍ ຢ່າງເປັນລະບົບຕໍ່ເນື່ອງ ແລະ ມີຈຸດສຸມ ເພື່ອຮັບປະກັນການນໍາໃຊ້ງົບປະມານຂອງລັດ ໃຫ້ມີປະສິດທິຜົນ, ພ້ອມທັງ ຊຸກຍູ້ ແນະນໍາ ທ້ອງຖິ່ນ ເປັນເຈົ້າການໃນການກວດກາ ບັນດາຫົວໜ່ວຍງົບປະມານທີ່ຂຶ້ນກັບຕົນ;

+ ລາຍຈ່າຍວິຊາການ ແລະ ກອງທຶນ ໃຫ້ປະຕິບັດຕາມຄໍາແນະນໍາເລກທີ 0016/ກງ, ລົງວັນທີ 03 ມັງກອນ 2019 ພາຍຫຼັງປະຕິບັດ 09 ເດືອນແລ້ວ ໃຫ້ສົມທົບກັບ ບັນດາຂະແໜງລາຍຮັບ, ຄັງເງິນແຫ່ງຊາດ ແລະ ຫົວໜ່ວຍງົບປະມານ ດໍາເນີນການໄລ່ລຽງ ໃຫ້ຖືກຕ້ອງຕາມລະບຽບການ.

- ຄັງເງິນແຫ່ງຊາດ ແລະ ຄັງເງິນແຫ່ງຊາດປະຈໍາແຂວງ, ນະຄອນຫຼວງ ເປັນເຈົ້າການ:

+ ພັດທະນາລະບົບຂໍ້ມູນຂ່າວສານຄັງເງິນ (RTIS) ໃຫ້ສາມາດຕອບສະໜອງການຄຸ້ມຄອງເກັບລາຍຮັບງົບປະມານລວມສູນທົ່ວປະເທດ ຜ່ານລະບົບບັນຊີລວມສູນຄັງເງິນແຫ່ງຊາດ, ພ້ອມທັງ ສືບຕໍ່ຜັນຂະຫຍາຍຢູ່ບັນດາຄັງເງິນໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນການລາຍງານຍອດເຫຼືອເມັດເງິນຂອງລັດ ແລະ ການສະຫຼຸບລາຍງານແບບທັນທີ (Auto Realtime);

+ ສົມທົບກັບບັນດາທະນາຄານ ແລະ ສະຖາບັນການເງິນອື່ນ ເພື່ອຂະຫຍາຍການເບີກຈ່າຍເງິນເດືອນ ໃຫ້ທັນຕາມກໍານົດເວລາ. ສໍາລັບບັນດາເມືອງທີ່ຢູ່ເຂດຫ່າງໄກສອກຫຼີກ ແລະ ບໍ່ມີໜ່ວຍບໍລິການຂອງທະນາຄານ ຫຼື ຕູ້ ATM ແມ່ນໃຫ້ສາມາດນໍາໃຊ້ຜະລິດຕະພັນ U-money ໃນການເບີກຈ່າຍ;

+ ບຸກທະລຸການປັບປຸງທາງດ້ານກົນໄກ, ວິທີການ ແລະ ການບໍລິການ ໃນການກວດກາແຜນລາຍຈ່າຍ ແລະ ເອກະສານສະເໜີຂໍເບີກຈ່າຍຂອງບັນດາຂະແໜງການ, ທ້ອງຖິ່ນ ແລະ ພາກທຸລະກິດ ໃຫ້ມີຄວາມກະທັດຮັດ, ວ່ອງໄວ, ຮັບປະກັນດ້ານລະບຽບການ ແລະ ສາມາດຈັດຕັ້ງປະຕິບັດໄດ້ຕາມແຜນການ;

+ ກວດກາເອກະສານຊ້ອນທ້າຍກ່ອນຈ່າຍ ຕາມລະບຽບການ ບົນພື້ນຖານແຜນວຽກ, ແຜນງານ ແລະ ການປະຕິບັດຕົວຈິງ. ກໍລະນີແຜນລາຍຈ່າຍບໍ່ສອດຄ່ອງກັບລະບຽບການ ເປັນຕົ້ນ: ເອກະສານຊ້ອນທ້າຍບໍ່ຄົບຖ້ວນ ຫຼື ແຜນຄິດໄລ່ຊໍ້າຊ້ອນ ລວມທັງລາຍຈ່າຍ ທີ່ເຫັນວ່າບໍ່ຖືກຕ້ອງ ໃຫ້ໂຈະ ຫຼື ຍົກເລີກລາຍຈ່າຍດັ່ງກ່າວ;

+ ການຈັດສັນແຜນງົບປະມານປະຈໍາປີ ຫາກບໍ່ສໍາເລັດທັນກໍານົດເວລາ ໃຫ້ປະຕິບັດຕາມມາດຕາ 62 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ໂດຍອະນຸຍາດໃຫ້ຄັງເງິນແຫ່ງຊາດ ຈ່າຍລ່ວງໜ້າໄດ້ເທົ່າກັບ ໜຶ່ງສ່ວນສິບສອງ ຂອງຍອດລາຍຈ່າຍທີ່ປະຕິບັດໃນປີຜ່ານມາ ເພື່ອຈ່າຍເງິນເດືອນ, ເງິນນະໂຍບາຍ, ລາຍຈ່າຍບໍລິຫານ ແລະ ຊໍາລະໜີ້ສິນ ທີ່ຮອດກໍານົດສັນຍາ ແລ້ວຈຶ່ງປະກອບເອກະສານເພື່ອປິດບັນຊີ ຕາມລະບຽບການ;

+ ໃຫ້ຕິດຕາມ ແລະ ບັນທຶກລາຍຮັບ-ລາຍຈ່າຍຂອງຫົວໜ່ວຍບໍລິຫານວິຊາການ ແລະ ກອງທຶນຂອງລັດ ເປັນອັນສະເພາະ ເພື່ອບໍ່ໃຫ້ສັບປົນກັບລາຍຮັບ-ລາຍຈ່າຍງົບປະມານປົກກະຕິ, ພ້ອມທັງ ສະໜອງຂໍ້ມູນໃຫ້ ຂະແໜງງົບປະມານເປັນແຕ່ລະໄລຍະ;

+ ຫ້າມຈ່າຍລ່ວງໜ້ານອກແຜນງົບປະມານໃຫ້ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ ຢ່າງເດັດຂາດ. ຫາກມີການຈ່າຍລ່ວງໜ້ານອກແຜນ ຕ້ອງໄດ້ປະຕິບັດວິໄນການເງິນຢ່າງເຂັ້ມງວດ; ສໍາລັບການຈ່າຍລ່ວງໜ້ານອກແຜນງົບປະມານໃນໄລຍະຜ່ານມາ ໃຫ້ແຍກລະອຽດ ແລະ ກໍານົດມາດຕະການແກ້ໄຂ ເພື່ອສະສາງບັນຊີໃນລະບົບຄັງເງິນແຫ່ງຊາດ ໃຫ້ຫຼຸດລົງຢ່າງຕັ້ງໜ້າ.

- ກົມການເງິນຕ່າງປະເທດ ເປັນເຈົ້າການ:

+ ເງິນຊ່ວຍເຫຼືອລ້າເປັນໂຄງການ ທີ່ຂະແໜງແຜນການ ແລະ ການລົງທຶນ ຄຸ້ມຄອງ ທີ່ໄດ້ຈັດຕັ້ງປະຕິບັດຢູ່ຂັ້ນທ້ອງຖິ່ນ ແມ່ນໃຫ້ບັນດາແຂວງ ແລະ ນະຄອນຫຼວງ ເຮັດໜ້າທີ່ຕິດຕາມການປະຕິບັດໂຄງການ ແລະ ບັນທຶກຕົວເລກຈິດຮັບ-ຈິດຈ່າຍ ລວມສູນຢູ່ສູນກາງ ຕາມຂໍ້ມູນທີ່ ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) ໄດ້ແຈ້ງໃຫ້ຮັບຊາບເປັນແຕ່ລະໄລຍະ;

+ ປະສານສົມທົບກັບ ກະຊວງແຜນການ ແລະ ການລົງທຶນ ເພື່ອສັງລວມຂໍ້ມູນການຊ່ວຍເຫຼືອລ້າຈາກຕ່າງປະເທດໃຫ້ຈະແຈ້ງ, ຄົບຖ້ວນ ແລະ ຖືກຕ້ອງ, ພ້ອມທັງ ປະສານສົມທົບກັບທ້ອງຖິ່ນ ເພື່ອກໍາໄດ້ສະພາບ ແລະ ຂໍ້ມູນການຊ່ວຍເຫຼືອລ້າທີ່ທ້ອງຖິ່ນໄດ້ຮັບໂດຍກົງຈາກຄູ່ຮ່ວມພັດທະນາ ຫຼື ຜູ້ໃຫ້ທຶນ, ປະສານສົມທົບໄປຕາມກົນໄກ ແລະ ລະບົບຂອງງົບປະມານແຫ່ງລັດ.

- ກົມຄຸ້ມຄອງໜີ້ສິນສາທາລະນະ ລົງເລິກຄຸ້ມຄອງ ແລະ ຄົ້ນຄ້ວາມາດຕະການແກ້ໄຂໜີ້ສິນຂອງບັນດາຂະແໜງການ, ທ້ອງຖິ່ນ ແລະ ລັດວິສາຫະກິດ ເພື່ອວິເຄາະຜົນກະທົບຕໍ່ຖານະໜີ້ສິນລວມຂອງປະເທດ ແລະ ຢັ້ງຢືນຕໍ່ການປະເມີນປະສິດທິຜົນຂອງໂຄງການຕາມຫຼັກການວິທະຍາສາດ ແລະ ກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະກໍານົດໄວ້.

3. ດ້ານການດຸນດ່ຽງງົບປະມານ

3.1 ຂະແໜງການເງິນຂັ້ນສູນກາງ (ກົມຄຸ້ມຄອງໜີ້ສິນສາທາລະນະ, ກົມການເງິນຕ່າງປະເທດ, ຄັງເງິນແຫ່ງຊາດ, ກົມງົບປະມານແຫ່ງລັດ ແລະ ກົມກ່ຽວຂ້ອງ) ປະຕິບັດດັ່ງນີ້:

- ດໍາເນີນຂັ້ນຕອນການລະດົມແຫຼ່ງທຶນ ເພື່ອມາດຸນດ່ຽງແຜນງົບປະມານ ປະຈໍາປີ ໂດຍເລີ່ມແຕ່ຕົ້ນປີງົບປະມານ ແລະ ຄົ້ນຄ້ວາຊອກຫາແຫຼ່ງດຸນດ່ຽງຈາກຫຼາຍແຫຼ່ງທັງພາຍໃນ ແລະ ຕ່າງປະເທດ ເພື່ອໃຫ້ພຽງພໍ;
- ແຍກການຄຸ້ມຄອງ ແລະ ບໍລິຫານໜີ້ສິນພາຍໃນ ແລະ ຕ່າງປະເທດ ສະເພາະ ເພື່ອໃຫ້ສາມາດບໍລິຫານຈັດສັນແຜນ ແລະ ການທົດແທນຄືນ ໃຫ້ມີຄວາມຍືດຢຸ່ນ ແລະ ພຽງພໍ;
- ສະໜອງແຫຼ່ງເງິນ ເພື່ອດຸນດ່ຽງ ໃຫ້ບັນດາແຂວງ ທີ່ຂາດດູນໃຫ້ວ່ອງໄວ ໂດຍສົມທົບກັບລາຍຮັບຂອງທ້ອງຖິ່ນເກັບໄດ້ ເພື່ອປະຕິບັດລາຍຈ່າຍເງິນເດືອນ ແລະ ເງິນນະໂຍບາຍ ໃຫ້ພຽງພໍ.

3.2 ຂະແໜງການເງິນຂັ້ນທ້ອງຖິ່ນ

- ແຂວງທີ່ຂາດດູນ: ໃຫ້ນໍາໃຊ້ລາຍຮັບຂອງແຂວງເປັນຫຼັກ ເພື່ອປະຕິບັດລາຍຈ່າຍເງິນເດືອນ ແລະ ເງິນນະໂຍບາຍເປັນຕົ້ນຕໍ ແລະ ທັນເວລາ, ສ່ວນທີ່ບໍ່ພຽງພໍ ຈຶ່ງນໍາໃຊ້ແຫຼ່ງດຸນດ່ຽງ ຈາກສູນກາງ;

- ແຂວງ ແລະ ນະຄອນຫຼວງ ທີ່ເກີນດຸນ: ຕ້ອງເອົາໃຈໃສ່ໃນການປະຕິບັດລາຍຈ່າຍເງິນເດືອນ, ເງິນນະໂຍບາຍ ເປັນຕົ້ນຕໍ, ພ້ອມທັງ ດຸ່ນດ່ຽງງົບປະມານເກີນດຸນ ໃຫ້ສູນກາງທັນຕາມກຳນົດເວລາ;
- ໃຫ້ບັນດາແຂວງ ແລະ ນະຄອນຫຼວງ ເອົາໃຈໃສ່ຄຸ້ມຄອງ ການດຸ່ນດ່ຽງງົບປະມານ ຂອງບັນດາເມືອງ ຕາມແຜນ ທີ່ສະພາປະຊາຊົນຂັ້ນແຂວງຮັບຮອງ.

4. **ການແກ້ໄຂຜົນການກວດສອບ**

- ໃຫ້ຫ້ອງການກະຊວງການເງິນ ເປັນເຈົ້າການສືບຕໍ່ຈັດຕັ້ງປະຕິບັດຕາມບົດບັນທຶກລະຫວ່າງ ອົງການກວດສອບແຫ່ງລັດ ແລະ ກະຊວງການເງິນ ລົງວັນທີ 07 ມິຖຸນາ 2019 ເພື່ອເປັນໃຈກາງສັງລວມຂໍ້ມູນບັນຫາຄົງຄ້າງ ຕາມຜົນການກວດສອບຂອງຂະແໜງການເງິນ ໃຫ້ຄົບຖ້ວນ ແລະ ຈະແຈ້ງ ແລ້ວສົ່ງໃຫ້ກົມກວດກາການເງິນ ຕິດຕາມ, ກວດກາ ແລະ ປະເມີນຜົນຂອງການແກ້ໄຂຜົນຂອງການກວດສອບເປັນແຕ່ລະໄລຍະ;
- ບັນດາຫົວໜ່ວຍງົບປະມານ ຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນເຈົ້າການສ້າງກົນໄກປະສານສົມທົບກັບອົງການກວດສອບແຫ່ງລັດ, ອົງການກວດກາລັດຖະບານ ແລະ ຂະແໜງການເງິນ ເພື່ອສັງລວມຂໍ້ມູນ, ບັນຫາຄົງຄ້າງ ຕາມຜົນການກວດສອບ ໃຫ້ຄົບຖ້ວນຈະແຈ້ງ ເພື່ອສາມາດຕິດຕາມ, ກວດກາ ແລະ ປະເມີນຜົນຂອງການແກ້ໄຂຜົນຂອງການກວດສອບໃນແຕ່ລະໄລຍະ;
- ຄົ້ນຄ້ວາແຕ່ງຕັ້ງຄະນະຮັບຜິດຊອບແກ້ໄຂຜົນການກວດສອບຂອງຕົນ ແລະ ມອບໝາຍຄວາມຮັບຜິດຊອບຢ່າງຈະແຈ້ງ ເພື່ອວາງມາດຕະການໃນການແກ້ໄຂ ຕາມກົດໝາຍ, ຕາມການແນະນຳ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອເກັບກູ້ຄືນ ແລະ/ຫຼື ນຳໃຊ້ແຜນງົບປະມານຂອງຕົນໃນແຕ່ລະປີເພື່ອແກ້ໄຂ;
- ສຳລັບຜົນການກວດສອບ ທີ່ບໍ່ສາມາດແກ້ໄຂໄດ້ ໃຫ້ສັງລວມລາຍງານລັດຖະບານ ໂດຍຜ່ານອົງການກວດກາລັດ ແລະ ຂະແໜງການເງິນ ເພື່ອນຳສະເໜີສະພາແຫ່ງຊາດ ພິຈາລະນາ.

## IV. ນະໂຍບາຍສົ່ງເສີມ ການເກັບລາຍຮັບ ແລະ ການປະຕິບັດລາຍຈ່າຍ

1. ນະໂຍບາຍກ່ຽວກັບລາຍຮັບເກີນແຜນ

- ບັນດາຂະແໜງການ ສູນກາງ ແລະ ທ້ອງຖິ່ນ ທີ່ສາມາດປະຕິບັດ ລາຍຮັບລວມຂອງຕົນຄຸ້ມຄອງໄດ້ເກີນແຜນການຜ່ານການໄລ່ລຽງຂາດຕົວ ແລະ ໄດ້ຮັບການຢັ້ງຢືນຈາກອົງການກວດສອບ, ກະຊວງການເງິນ ນຳສະເໜີ ລັດຖະບານພິຈາລະນາ ອັດຕາສ່ວນການນຳໃຊ້ ເງິນເກີນແຜນດັ່ງກ່າວ ຕາມມາດຕາ 49 ຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ;
- ເງິນເກີນແຜນຂອງ ປີ 2022 ໃຫ້ເອົາເຂົ້າແຜນດັດແກ້ ປີ 2023 ພາຍຫຼັງໄດ້ຮັບການແຈ້ງແຜນຈາກກະຊວງການເງິນ. ເປົ້າໝາຍການນຳໃຊ້ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງຂະແໜງການສູນກາງ ແລະ ທ້ອງຖິ່ນຕາມບູລິມະສິດ ເປັນຕົ້ນ: ການຊຳລະໜີ້ສິນບໍລິຫານ (ໄຟຟ້າ, ນໍ້າປະປາ, ໂທລະຄົມມະນາຄົມ ແລະ ອື່ນໆ), ແກ້ໄຂຜົນຂອງການກວດສອບ, ຕ້ານ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດຕ່າງໆ, ໄພທຳມະຊາດ, ກູ້ໄພ ແລະ ສົ່ງ ເສີມການເກັບລາຍຮັບ, ຊຳລະໜີ້ສິນໂຄງການລົງທຶນຂອງລັດທີ່ມີປະສິດຕິຜົນ ຕາມແຜນທີ່ສະພາແຫ່ງຊາດຮັບຮອງ ແລະ ສ້າງອາຊີບ-ສ້າງວຽກເຮັດງານທຳໃຫ້ປະຊາຊົນ ເພື່ອແກ້ໄຂຄວາມທຸກຍາກ. ກໍລະນີ ຂັ້ນທ້ອງຖິ່ນ ຫາກເກັບລາຍຮັບບໍ່ໄດ້ຕາມແຜນ ສາມາດນຳໃຊ້ເປັນແຫຼ່ງທຶນເພື່ອມາດຸ່ນດ່ຽງແຜນ ປີ 2023.

2. ວິທີການແກ້ໄຂການເກັບລາຍຮັບທີ່ບໍ່ໄດ້ຕາມແຜນການ ຂອງຂະແໜງການ ຂັ້ນສູນກາງ ແລະ ທ້ອງຖິ່ນ ຫາກຄາດຄະເນຈະບໍ່ສາມາດປະຕິບັດໄດ້ຕາມແຜນ ທີ່ສະພາແຫ່ງຊາດຮັບຮອງ ໃຫ້ຄົ້ນຄ້ວາຫຼຸດລາຍຈ່າຍທີ່ບໍ່ຈຳເປັນ, ທີ່ບໍ່ມີເງື່ອນໄຂປະຕິບັດ ເພື່ອຮັກສາຄວາມສົມດຸນຂອງງົບປະມານ;
3. ການດັດສະເລ່ຍຮ່ວງລາຍຈ່າຍພາຍໃນພາກ ບໍ່ໃຫ້ເກີນ 2 ຄັ້ງຕໍ່ປີ ຊຶ່ງແມ່ນຜູ້ສັ່ງການເປັນຜູ້ຕົກລົງ ແລ້ວລາຍງານຜູ້ສັ່ງການເອກ ເພື່ອຮັບຊາບ. ສຳລັບຂັ້ນທ້ອງຖິ່ນ ອະນຸຍາດໃຫ້ຜູ້ສັ່ງການ ສາມາດດັດສະເລ່ຍ ໄດ້ສະເພາະ ແຜນລາຍຈ່າຍພາກເງິນເດືອນ ລະຫວ່າງ ຂະແໜງປົກຄອງ, ຂະແໜງສຶກສາ ແລະ ຂະແໜງສາທາລະນະສຸກ. (ກໍລະນີລາຍຈ່າຍທີ່ໄດ້ອະນຸມັດຜ່ານລະບົບຂໍ້ມູນຂ່າວສານການເງິນ ແລ້ວ ແມ່ນບໍ່ສາມາດດັດສະເລ່ຍໄດ້);

4. ແຜນລາຍຈ່າຍວິຊາການ ແລະ ກອງທຶນ ສາມາດດັດສະເລ່ຍໃນພາກດຽວກັນໃຫ້ຄົບຖ້ວນ ແລະ ພຽງພໍ ລະຫວ່າງ ຂະແໜງປົກຄອງ, ຂະແໜງສຶກສາ ແລະ ຂະແໜງສາທາລະນະສຸກ ຂອງທ້ອງຖິ່ນ ແຕ່ບໍ່ອະນຸຍາດໃຫ້ດັດສະເລ່ຍ ຂ້າມພາກ, ຫາກຈໍາເປັນຕ້ອງດັດສະເລ່ຍ ໃຫ້ສະເໜີຜູ້ສັ່ງການເອກະພາບ;

5. ມາດຕະການຕໍ່ຜູ້ລະເມີດ: ຂະແໜງການເງິນປະສານກັບພາກສ່ວນກ່ຽວຂ້ອງ ຄົ້ນຄ້ວາກໍານົດມາດຕະການເດັດຂາດ ຕໍ່ຫົວໜ່ວຍງົບປະມານທີ່ລະເມີດວິໄນການເງິນ ເພື່ອແກ້ໄຂປະກົດການຫຍໍ້ທໍ້ໃຫ້ຫຼຸດລົງຢ່າງຕັ້ງໜ້າ ເປັນຕົ້ນ ມາດ ຕະການໃນການຫຼຸດ ຫຼື ຕັດລາຍຈ່າຍໃນປີຕໍ່ໄປ ແລະ ມາດຕະການອື່ນໆ ຕາມທີ່ກົດໝາຍ ແລະ ລະບຽບການ ກ່ຽວຂ້ອງໄດ້ກໍານົດ.

## V. ຂັ້ນຕອນ ແລະ ການປະກອບເອກະສານ ອະນຸມັດລາຍຈ່າຍງົບປະມານ

ໃຫ້ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ສືບຕໍ່ປະຕິບັດຕາມຄໍາແນະນໍາ ກ່ຽວກັບການປະກອບເອກະສານອະນຸມັດ ລາຍຈ່າຍງົບປະມານແຫ່ງລັດ ແລະ ການເກັບສໍາເນົາ ສະບັບເລກທີ 2718/ກງ, ລົງວັນທີ 28 ສິງຫາ 2018 ແລະ ຄໍາແນະ ນໍາ ກ່ຽວກັບການປະກອບເອກະສານ ແລະ ການກວດກາ ເອກະສານລາຍຈ່າຍງົບປະມານແຫ່ງລັດ ແລະ ທຶນຊ່ວຍເຫຼືອ ໂຄງການເພື່ອການພັດທະນາຢູ່ຄັງເງິນແຫ່ງຊາດ ສະບັບເລກທີ 0866/ກງ, ລົງວັນທີ 22 ມີນາ 2019;

ສໍາລັບຂັ້ນສູນກາງ ໃຫ້ຄົ້ນຄວ້າເຮັດທົດລອງ ໂດຍມອບຄວາມຮັບຜິດຊອບ ໃຫ້ຫົວໜ່ວຍງົບປະມານ ເປັນເຈົ້າການ ບັນທຶກແຜນ, ປະຕິບັດ ແລະ ສະຫຼຸບລາຍງານ ເຂົ້າໃນລະບົບຂໍ້ມູນຂ່າວສານການເງິນ ເພື່ອຫຼຸດຜ່ອນຂັ້ນຕອນການປະກອບ ເອກະສານ.

## VI. ການສະຫຼຸບລາຍງານ ແລະ ການກະກຽມປິດບັນຊີງົບປະມານ

1. ການສະຫຼຸບ-ລາຍງານ ການຈັດຕັ້ງປະຕິບັດລາຍຮັບ-ລາຍຈ່າຍ ເປັນແຕ່ລະເດືອນ ແລະ ປີ ຂອງບັນດາຫົວໜ່ວຍ ງົບປະມານ ແລ້ວສົ່ງໃຫ້ກະຊວງການເງິນ ບໍ່ໃຫ້ກາຍວັນທີ 10 ຂອງເດືອນຖັດໄປ ໃຫ້ປະຕິບັດດັ່ງນີ້:
   - ຂັ້ນສູນກາງ ໃຫ້ສົມທຽບ ແລະ ຢັ້ງຢືນຈາກຄັງເງິນແຫ່ງຊາດ;
   - ຂັ້ນທ້ອງຖິ່ນ ໃຫ້ສົມທຽບ ແລະ ຢັ້ງຢືນຈາກຄັງເງິນແຫ່ງຊາດປະຈໍາແຂວງ ເພື່ອໃຫ້ພະແນກການເງິນສັງລວມ (ຂະ ແໜງງົບປະມານ ແລະ ສ່ວຍສາອາກອນ).
2. ການປິດຮັບເອກະສານຂອງຂະແໜງງົບປະມານ
   - ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ນໍາສົ່ງເອກະສານຂໍເບີກຈ່າຍງົບປະມານ (ອະນຸມັດ) ບໍ່ໃຫ້ກາຍວັນທີ 12 ທັນວາ 2022 ເຖິງຂະແໜງງົບປະມານ ເພື່ອຄົ້ນຄ້ວາ ອະນຸມັດ ແລະ ສະໂນດສົ່ງຄັງເງິນແຫ່ງຊາດ ແລະ ຄັງເງິນແຫ່ງ ຊາດປະຈໍາແຂວງ ບໍ່ໃຫ້ກາຍວັນທີ 16 ທັນວາ 2022, ຈາກນັ້ນ ໃຫ້ປະກອບເອກະສານຂໍຖອນເງິນ (ໃບຂໍ ຖອນເງິນ) ສົ່ງຄັງເງິນແຫ່ງຊາດ ແລະ ຄັງເງິນແຫ່ງຊາດປະຈໍາແຂວງ ບໍ່ໃຫ້ກາຍວັນທີ 20 ທັນວາ 2022;
   - ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ນໍາສົ່ງເອກະສານຂໍເບີກຈ່າຍງົບປະມານ (ຄໍາສັ່ງຈ່າຍ) ບໍ່ໃຫ້ກາຍວັນທີ 16 ທັນວາ ປີ 2022 ເຖິງຂະແໜງງົບປະມານແຫ່ງລັດ ເພື່ອຄົ້ນຄ້ວາ ອອກຄໍາສັ່ງຈ່າຍ ແລະ ສະໂນດສົ່ງຄັງເງິນແຫ່ງລັດ ບໍ່ໃຫ້ກາຍວັນທີ 20 ທັນວາ 2022;
3. ລາຍຈ່າຍລົງທຶນຂອງລັດ ໃຫ້ຂະແໜງການຂັ້ນການສູນກາງ ແລະ ທ້ອງຖິ່ນ (ເຈົ້າຂອງໂຄງການ) ສະຫຼຸບການຈັດຕັ້ງ ປະຕິບັດລາຍຈ່າຍດັ່ງກ່າວ ປະຈໍາງວດ ແລະ ປີ ເປັນໂຄງການລະອຽດ ໂດຍແຍກໃຫ້ເຫັນແຫຼ່ງທຶນ (ວິຊາການ, ທຶນນໍ້າ ເທີນສອງ, ຊ່ວຍເຫຼືອລ້າ ແລະ ເງິນກູ້ຢືມ) ສົ່ງໃຫ້ຂະແໜງການເງິນ ແລະ ຂະແໜງແຜນການ ແລະ ການລົງທຶນ;
4. ໃຫ້ຂະແໜງການ ແລະ ທ້ອງຖິ່ນ ປິດສະຫຼຸບງົບປະມານເບື້ອງຕົ້ນ (ສູນໂມງ) ວັນທີ 31 ທັນວາ 2022 ແລະ ປິດ ສະຫຼຸບຂາດຕົວງົບປະມານແຫ່ງລັດ ໃນວັນທີ 31 ມີນາ 2023;
5. ກໍານົດເວລາສົ່ງບົດສະຫຼຸບການຈັດຕັ້ງປະຕິບັດງົບປະມານ: ໃຫ້ບັນດາກະຊວງ, ອົງການທຽບເທົ່າ ແລະ ພະແນກການ ເງິນແຂວງ, ນະຄອນຫຼວງ ປະຕິບັດດັ່ງນີ້:
   - ນໍາສົ່ງບົດສະຫຼຸບການຈັດຕັ້ງປະຕິບັດງົບປະມານເບື້ອງຕົ້ນ (ສູນໂມງ) ປະຈໍາປີ 2022 ພ້ອມທັງຕີລາຄາຂໍ້ສະດວກ, ຂໍ້ ຫຍຸ້ງຍາກ, ສາຍເຫດ, ບົດຮຽນທີ່ຖອດຖອນໄດ້ ແລະ ການສະເໜີວິທີແກ້ໄຂໃນຕໍ່ໜ້າ ໃຫ້ຄັງເງິນແຫ່ງຊາດ ກ່ອນ

ວັນທີ 20 ມັງກອນ 2023 ເພື່ອສັງລວມການສະຫຼຸບທົ່ວປະເທດ ນຳສົ່ງກົມງົບປະມານແຫ່ງລັດ ກ່ອນວັນທີ 30 ມັງກອນ 2023 ເພື່ອຮ່າງບົດລາຍງານລັດຖະບານ ພິຈາລະນາ;

- ນຳສົ່ງບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານ ປະຈຳປີ 2022 ຂອງຕົນ ໂດຍຜ່ານການໄລ່ລຽງ ແລະ ໄດ້ຮັບການຢັ້ງຢືນຈາກຄັງເງິນແຫ່ງຊາດ ແລະ ຄັງເງິນແຫ່ງຊາດປະຈຳແຂວງ ຢ່າງຊ້າບໍ່ໃຫ້ກາຍວັນທີ 30 ເມສາ 2023 ເພື່ອໃຫ້ຄັງເງິນແຫ່ງຊາດ ສາມາດສັງລວມຕາຕະລາງສະຫຼຸບຂາດຕົວງົບປະມານແຫ່ງລັດທົ່ວປະເທດ ແລ້ວນຳສົ່ງ ກົມງົບປະມານແຫ່ງລັດ ເພື່ອຮ່າງບົດລາຍງານການສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປະຈຳປີ 2022 ເພື່ອສະເໜີລັດຖະບານພິຈາລະນາ ກ່ອນວັນທີ 30 ມິຖຸນາ 2023.

## VII. ການຈັດຕັ້ງຜັນຂະຫຍາຍ

1. ບັນດາຂະແໜງການ ຂັ້ນສູນກາງ ແລະ ທ້ອງຖິ່ນ ຈົ່ງຮັບຮູ້ ແລະ ນຳພາ-ຊີ້ນຳຂະແໜງການທີ່ຕົນຄຸ້ມຄອງ ເພື່ອຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ, ພ້ອມທັງ ຈັດຕັ້ງເຜີຍແຜ່ຄຳແນະນຳລະອຽດຕາມຂະແໜງການວິຊາສະເພາະ ແລະ ເມືອງຂອງຕົນ ຢ່າງເຂັ້ມງວດ;
2. ສຳລັບມາດຕະການ ແລະ ວິທີການຈັດຕັ້ງປະຕິບັດລາຍຮັບ-ລາຍຈ່າຍລະອຽດ ມອບໃຫ້ກົມກ່ຽວຂ້ອງ ຂອງ ກະຊວງການເງິນ ອອກເປັນຄຳແນະນຳທາງດ້ານວິຊາການໃນການຈັດຕັ້ງປະຕິບັດຂອງຂະແໜງການຕົນຕື່ມ ແລ້ວສົ່ງໃຫ້ກົມງົບປະມານແຫ່ງລັດ ເພື່ອສັງລວມລາຍງານຢ່າງເປັນປົກກະຕິ;
3. ໃຫ້ກະຊວງການເງິນ ແຕ່ງຕັ້ງຄະນະລົງໄປຊຸກຍູ້, ແນະນຳ, ຕິດຕາມ ກວດກາການຈັດຕັ້ງປະຕິບັດທາງດ້ານວິຊາການ ແລະ ລາຍງານຄວາມຄືບໜ້າໃຫ້ລັດຖະບານ ເປັນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງອອກຄຳແນະນຳວ່າດ້ວຍການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022 ສະບັບນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ.

ລັດຖະມົນຕີກະຊວງການເງິນ

ບຸນໂຈມ ອຸບົນປະເສີດ